ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ
ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ...2626.../ຍທຂ.
ບໍລິຄຳໄຊ, ວັນທີ 15 ມິຖຸນາ 2026

ຊື່ໂຄງການ: ປັບປຸງ ຂະຫຍາຍທາງ 4B ແຕ່ 4 ແຍກທ່າດ່ານ ຫາ 3 ແຍກກົມສິບເຈັດ, ເມືອງປາກຊັນ, ແຂວງບໍລິຄຳໄຊ.
ສັນຍາເລກທີ:..................

# ຫນັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງບໍລິຄຳໄຊ, ສະບັບເລກທີ **429**/ຂບຊ, ລົງວັນທີ 03 ກໍລະກົດ 2024 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄຳໄຊ;
- ອີງຕາມ ແຈ້ງການຂອງ ຄະນະກຳມະການປົກຄອງແຂວງ, ສະບັບເລກທີ 07/ຄປຂ, ລົງວັນທີ 27 ມີນາ 2026 ກ່ຽວກັບ ການແຈ້ງແຜນ ການລົງທຶນຂອງລັດ ປະຈຳປີ 2026 (ຄັ້ງທີ 2).

1. ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄຳໄຊ ໄດ້ຮັບການຊີ້ນຳຈາກຂັ້ນເທິງໃນການຈັດຕັ້ງປະຕິບັດ ການປະມູນຈັດຊື້-ຈັດຈ້າງ ໂຄງການປັບປຸງ ຂະຫຍາຍທາງ 4B ແຕ່ 4 ແຍກທ່າດ່ານ ຫາ 3 ແຍກກົມສິບເຈັດ, ເມືອງປາກຊັນ ແຂວງບໍລິຄຳໄຊ, ລວງຍາວ 2.600 ກິໂລແມັດ, ດ້ວຍການດຳເນີນການປະມູນເປີດກວ້າງພາຍໃນ, ສຳລັບບ້ວງເງິນທີ່ຈະຊຳລະສະສາງ ແມ່ນຈະໄດ້ສະເໜີເອົາເຂົ້າແຜນ ສາລະບານງົບປະມານແຫ່ງລັດໃນແຕ່ລະສົກປີ.
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ ຂໍເຊີນບັນດາບໍລິສັດ ທີ່ມີໃບອານຸຍາດດຳເນີນທຸລະກິດດ້ານການກໍ່ສ້າງຂົວ-ທາງ ທີ່ມີຄວາມສົນໃຈ, ເຂົ້າຮ່ວມປະມູນໂຄງການດັ່ງກ່າວນີ້, ໄລຍະການກໍ່ສ້າງແມ່ນ 36 ເດືອນ.
3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄວາມເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມ ກົດໝາຍທີ່ກ່ຽວພັນກັບວຽກທີ່ຈະດຳເນີນການກໍ່ສ້າງ ຢູ່ໃນຂອບເຂດ ແຂວງບໍລິຄຳໄຊ ຫຼື ທົ່ວປະເທດ.
5. ບໍລິສັດທີ່ມີຄວາມເໝາະສົມສົນໃຈ ສາມາດຕິດຕໍ່ພົວພັນ ແລະ ຊື້ເອກະສານປະມູນໄດ້ທີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ຂະແໜງຂົວທາງ, ຢູ່ບ້ານທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄຳໄຊ, ໂທລະສັບ/ແຟັກ: 054-212091 ແລະ ຂະແໜງຈັດຊື້-ຈັດຈ້າງ ພະແນກການເງິນແຂວງ, ໃນວັນ ແລະ ເວລາລັດຖະການ ວັນຈັນ - ວັນສຸກ, ເວລາ 8:00-12:00 ແລະ 13:00-16:00; ໂດຍໃຫ້ຍື່ນໜັງສືສະເໜີຫາ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ເລີ່ມແຕ່ວັນທີ **16 ມິຖຸນາ 2026** ເປັນຕົ້ນໄປໃນລາຄາ 500,000 ກີບ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.
6. ຊອງປະມູນຕ້ອງສົ່ງ ໃນເວລາ ຫລື ກ່ອນເວລາ 9:00 ໂມງເຊົ້າ, ຂອງວັນທີ **23 ກໍລະກົດ 2026**; ຊອງປະມູນໃດ ທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ.
7. ກອງປະຊຸມ ກ່ອນການຍື່ນຊອງປະມູນ ແລະ ເຂົ້າຢ້ຽມຢາມພາກສະໜາມ (site visit) ຈະໄດ້ຈັດຂຶ້ນໃນວັນທີ 10 ກໍລະກົດ 2026, ເວລາ 8:00 ໂມງເຊົ້າ.
8. ການເປີດຊອງປະມູນ ຈະໄດ້ຈັດຂຶ້ນທີ່ ຫ້ອງປະຊຸມ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ທາງ 21, ບ້ານທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄຳໄຊ, ໃນເວລາ **9:00** ໂມງເຊົ້າ, ຂອງວັນທີ **23 ກໍລະກົດ 2026**; ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.
9. ເອກະສານປະມູນບໍລິສັດຕ້ອງຂຽນໃບປະຕິຍານຕົນເອງດ້ວຍກຽດສັກສີຂອງບໍລິສັດເພື່ອປະກອບໜັງສືຄ້ຳປະກັນການປະມູນ, ໂດຍຫນັງສືຄ້ຳປະກັນການປະມູນຕ້ອງແມ່ນຫນັງສືຄ້ຳປະກັນຂອງບໍລິສັດເອງ.

ເບີໂທຕິດຕໍ່:

1. ທ່ານ ກ້ອນມວນດຳ ຈັນທະມີນາວົງ ໂທ 020 -22117888
2. ທ່ານ ຄຳປະເສີດ ພັນທະວົງ ຂະແໜງຈັດຊື້-ຈັດຈ້າງ ພະແນກການເງິນແຂວງ ໂທ: 020-28870055

ເຊັນແທນຫົວໜ້າພະແນກ
ຮອງຫົວໜ້າພະແນກ

ກະຊວງໂຍທາທິການ ແລະ ຂົນສົ່ງ
ພະແນກ ໂຍທາທິການ ແລະ ຂົນສົ່ງ
ແຂວງບໍລິຄຳໄຊ